ເຈ້ຍຂໍ້ມູນນີ້ແມ່ນພຽງ ສໍາລັບຜູ້ລົງຄະແນນໃນ ເຄົ້າຕີ ຫລື ເຂດປົກຄອງ Amador, Butte, Calaveras, El Dorado, Fresno, Los Angeles, Madera, Mariposa, Napa, Nevada, Orange, Sacramento, San Mateo, Santa Clara ແລະ Tuolumne.

# ຮູ້ຈັກສິດການລົງຄະແນນຂອງທ່ານ

ASIAN AMERICANS ADVANCING JUSTICE
ASIAN LAW CAUCUS

## ກຽມພ້ອມໃນການລົງຄະແນນ

ເພື່ອລົງຄະແນນໃນການເລືອກຕັ້ງ, ທ່ານຕ້ອງ ລົງທະບຽນໂຫວດກ່ອນ! ທ່ານສາມາດລົງທະບຽນເພື່ອໂຫວດຫາກທ່ານ:

- ຖືສັນຊາດອາເມລິກາ;
- ເປັນພົນລະເມືອງຂອງ California;
- ມີອາຍຸ 18 ປີຂຶ້ນໄປໃນວັນເລືອກຕັ້ງ;
- ບໍ່ຢູ່ໃນຄຸກ ຫລື ປ່ອຍຕົວໂດຍມີເງື່ອນໄຂ ສໍາລັບການມີຄວາມຜິດທາງອາຍາອັນຮ້າຍແຮງ ແລະ
- ບໍ່ໄດ້ຖືກຕັດສິນໂດຍສານວ່າເປັນຜູ້ "ບໍ່ມີຄວາມສົມບູນທາງດ້ານຈິດ"

### ລົງທະບຽນຮຽບຮ້ອຍບໍ?

ກວດກາແລະປັບປຸງ ຂໍ້ມູນການລົງທະບຽນ. ໃຊ້ voterstatus.sos.ca.gov ເພື່ອ:

- ຢືນຢັນ ທີ່ຢູ່ໄປສະນີຂອງທ່ານ
- ເພີ່ມ ຫລື ອັບເດດ ທີ່ຢູ່ອີເມວເພື່ອຮັບຂໍ້ມູນຈາກ ຫ້ອງການ ການເລືອກຕັ້ງ ເຄົ້າຕີຂອງທ່ານຢ່າງທັນການ
- ສະແດງພາສາທີ່ທ່ານຕ້ອງການເພື່ອຮັບເອກະສານແປ ຖ້າພວກມັນມີໃຫ້ໃນພື້ນທີ່ຂອງທ່ານ

### ຕ້ອງການ ລົງທະບຽນ?

ຈາກ ວັນຈັນ, ວັນທີ 19 ຕຸລາ ທ່ານສາມາດ ລົງທະບຽນ:

- ອອນລາຍນ໌ທີ່ www.registertovote.ca.gov;
- ທີ່ DMV, ຫ້ອງການໄປສະນີ, ຫໍສະໝຸດ, ຫລື ໃນ ຫ້ອງການເລືອກຕັ້ງປະຈໍາເຄົ້າຕີຂອງທ່ານ; ຫຼື
- ໂດຍການໂທເບີ (800) 345-8683 ເພື່ອຮຽກຂໍ ຟອມການລົງທະບຽນການລົງຄະແນນ ເຊິ່ງຕ້ອງຢູ່ໃນໄປສະນີລະຫວ່າງວັນທີ 19 ຕຸລາ. ບໍ່ຈໍາເປັນຕ້ອງຕິດສະແຕັມ!

### ຖ້າຂ້າພະເຈົ້າຕ້ອງການ ລົງທະບຽນຫລັງວັນທີ 19 ຕຸລາ ຈະເຮັດແນວໃດ?

ບໍ່ມີບັນຫາ! ທ່ານສາມາດຍັງລົງທະບຽນ ແລະໂຫວດໃນຊ່ວງເວລາຈົນຮອດວັນເລືອກຕັ້ງ ແລະ ລວມເຖິງວັນເລືອກຕັ້ງ.

| | |
|---|---|
| ທາງເລືອກ 1 | ທ່ານສາມາດໄປທີ່ ຫ້ອງການເລືອກຕັ້ງເຄົ້າຕີຂອງທ່ານ ຫລື ສູນການໂຫວດໃດໜຶ່ງໃນ ເຄົ້າຕີຂອງທ່ານເພື່ອໃຊ້ "ການລົງທະບຽນຂອງຜູ້ລົງຄະແນນໃນວັນດຽວກັນ" ເພື່ອ ລົງທະບຽນ ແລະ ໂຫວດໃນເວລານັ້ນ. ທ່ານຈະໄດ້ຮັບຟອມການລົງທະບຽນຜູ້ລົງຄະແນນ ແລະ ບັດເລືອກຕັ້ງ ເພື່ອສໍາເລັດກັບທີ່ເລີຍ. |
| ທາງເລືອກ 2 | ຖ້າທ່ານບໍ່ໄດ້ລົງທະບຽນໂຫວດ ແລະບໍ່ສາມາດໄປທີ່ ສະຖານທີ່ໂຫວດ, ຕິດຕໍ່ ຫ້ອງການເລືອກຕັ້ງ ເຄົ້າຕີຂອງທ່ານເພື່ອຖາມ ທ່ານສາມາດລົງທະບຽນ ແລະໂຫວດທາງໄກໄດ້ແນວໃດໂດຍການໃຊ້ "ການໂຫວດທີ່ເຂົ້າເຖິງໄດ້ທາງໄກຜ່ານໄປສະນີ." |

### ການເລືອກຕັ້ງທົ່ວໄປຂອງ CALIFORNIA ປີ 2020

| | |
|---|---|
| ເລີ່ມຕົ້ນ ວັນທີ 5 ຕຸລາ 2020 | ບັດເລືອກຕັ້ງ (Ballot) ໄດ້ສົ່ງເຖິງ ຜູ້ລົງຄະແນນທີ່ລົງທະບຽນທັງໝົດແລ້ວ |
| ວັນອັງຄານ ວັນທີ 6 ຕຸລາ 2020 | ກ່ອງສໍາລັບສົ່ງບັດເລືອກຕັ້ງເປີດ |
| ວັນອັງຄານ ວັນຈັນ ວັນທີ 19 ຕຸລາ 2020 | ເວລາກໍານົດການລົງທະບຽນ |
| ວັນເສົາ, 31 ຕຸລາ 2020 - ອັງຄານ, 3 ພະຈິກ 2020 | ສູນການເລືອກຕັ້ງດ້ວຍຕົນເອງ (ອາດຈະເປີດລ່ວງໜ້າໃນບາງເຄົ້າຕີ!) |

# ລົງຄະແນນແນວໃດ? ທ່ານມີທາງເລືອກ!

## ໂຫວດຈາກເຮືອນ

ຖ້າທ່ານລົງທະບຽນບໍ່ເກີນ ວັນທີ 19 ຕຸລາ, ທ່ານຈະໄດ້ຮັບ ບັດເລືອກຕັ້ງອັດຕະໂນມັດທາງໄປສະນີ ພ້ອມກັບຄໍາແນະນໍາວິທີການຕື່ມຂໍ້ມູນແລະສົ່ງກັບ. ທ່ານສາມາດ:

- ສົ່ງ ບັດເລືອກຕັ້ງຂອງທ່ານທາງໄປສະນີ-- ບໍ່ຕ້ອງຕິດສະແຕັມ!
  - ຈື່ໄວ້ວ່າໃຫ້ເຊັນ ແລະ ລົງວັນທີໃນຊອງບັດເລືອກຕັ້ງ.
  - ແນ່ໃຈວ່າ ບັດເລືອກຕັ້ງຂອງທ່ານມີໝາຍ Post ໃນ ຫລື ກ່ອນວັນເລືອກຕັ້ງ.
- ປະມັນໃນໜຶ່ງຂອງ ຫລາຍໆ "ກ່ອງສົ່ງບັດເລືອກຕັ້ງ" ທາງການທີ່ຕັ້ງຢູ່ທົ່ວ ເຄົ້າຕີ ຫລື ທີ່ ສູນລົງຄະແນນ -- ແລະບໍ່ຕ້ອງຕິດສະແຕັມ!
  - ຊອກຫາ "ກ່ອງສົ່ງບັດເລືອກຕັ້ງ" ໃກ້ຄຽງ ແລະໂຫວດທີ່ caearlyvoting.sos.ca.gov/

## ໂຫວດດ້ວຍຕົນເອງ

ຖ້າທ່ານຕ້ອງການໄປໂຫວດດ້ວຍຕົນເອງ, ທ່ານເຮັດໄດ້!

ທ່ານສາມາດໂຫວດທີ່ທຸກໆສູນການໂຫວດໃນ ເຄົ້າຕີຂອງທ່ານ. ສູນການໂຫວດຈະເປີດຈາກ **ວັນເສົາ, ວັນທີ 31 ຕຸລາ 2020, ຈົນເຖິງ ວັນອັງຄານ, ວັນທີ 3 ພະຈິກ 2020** ແລະ ບາງເຂດອາດເປີດ 10 ວັນກ່ອນ ວັນເລືອກຕັ້ງ. ທ່ານຈະໄດ້ຮັບຂໍ້ມູນກ່ຽວກັບ ສະຖານທີ່ ສູນການໂຫວດ ແລະ ຊົ່ວໂມງທາງໄປສະນີ ຫລື ທ່ານສາມາດກວດເບິ່ງທີ່ນີ້: caearlyvoting.sos.ca.gov.

ໃນວັນເລືອກຕັ້ງ, ສູນການລົງຄະແນນຈະເປີດຈາກ **7 ໂມງເຊົ້າ ຫາ 8 ໂມງແລງ**, ຕາບໃດທີ່ທ່ານຢູ່ໃນແຖວບໍ່ເກີນ 8 ໂມງແລງ, ທ່ານຈະສາມາດລົງຄະແນນໄດ້.

ຍ່າງເຂົ້າໄປໃນທຸກໆສູນການໂຫວດ ແລະ ເອົາຊື່ ແລະ ທີ່ຢູ່ຂອງທ່ານໃຫ້ພວກເຂົາເພື່ອຮັບບັດເລືອກຕັ້ງ. ຖ້າທ່ານຕ້ອງການໂຫວດໃນພາສາທີ່ນອກເໜືອຈາກອັງກິດ, ຖາມຫາກພວກເຂົາມີເອກະສານໃນພາສານັ້ນ ແລະ ຖ້າ ເຈົ້າໜ້າທີ່ຂອງສູນການໂຫວດສາມາດເວົ້າພາສານັ້ນໆ.

**ໃນເກືອບທຸກໆສະພາບການ, ແມ່ນບໍ່ຕ້ອງສະແດງ ID.** ທ່ານພຽງສະແດງເອກະສານຫາກທ່ານຈະລົງຄະແນນເປັນຄັ້ງທໍາອິດ ແລະ ທ່ານບໍ່ໄດ້ລະບຸ ໝາຍເລກໃບຂັບຂີ່, ເລກ ID ລັດ, ຫລື ໝາຍເລກປະກັນສັງຄົມໃນເວລາທ່ານລົງທະບຽນໃນການໂຫວດ. ຫາກນີ້ເປັນກໍລະນີ, ເອກະສານຫລາຍຢ່າງຈະໃຊ້ໄດ້. ໂທຫາຫ້ອງການເລືອກຕັ້ງຂອງທ່ານກ່ອນຫາກທ່ານກັງວົນ.

### ທີ່ນັ້ນຈະປົກປ້ອງ ສຸຂະພາບສາທາລະນະບໍ?

ແມ່ນ. ພະນັກງານທີ່ສະຖານທີ່ລົງຄະແນນຈະສວມໃສ່ຜ້າປິດປາກ ແລະ ປະຕິບັດຕາມຄໍາແນະນໍາກ່ຽວກັບ ສຸຂະພາບສາທາລະນະ ແລະ ຈະກໍານົດສະຖານທີ່ລົງຄະແນນເພື່ອ ອະນຸຍາດໃຫ້ມີ ການຮັກສາໄລຍະຫ່າງທາງຮ່າງກາຍ. ຜູ້ລົງຄະແນນຕ້ອງປະຕິບັດຕາມຂໍ້ຮຽກຮ້ອງທາງສຸຂະພາບສາທາລະນະທ້ອງຖິ່ນແລະລັດ, ລວມເຖິງການໃສ່ຜ້າປິດປາກ ແລະ ການຮັກສາໄລຍະຫ່າງທາງຮ່າງກາຍ.

ກົດໝາຍ California ອະນຸຍາດໃຫ້ທ່ານພາຄົນມານໍາສູງສຸດສອງຄົນເພື່ອຊ່ວຍໂຫວດດ້ວຍຕົນເອງ, ຕາບໃດທີ່ພວກເຂົາບໍ່ເປັນຕົວແທນຂອງນາຍຈ້າງ ຫລື ສະມາຄົມຂອງທ່ານ. ພາສະມາຊິກຄອບຄົວ ຫລື ເພື່ອນມານໍາ.

## ຫາກຂ້າພະເຈົ້າເກີດບັນຫາຂະນະໂຫວດ ຈະເຮັດແນວໃດ?

ຢ່າທໍ້ເດັດຂາດ! **ຮ້ອງຂໍເພື່ອໃຊ້ ການລົງທະບຽນຜູ້ລົງຄະແນນໃນວັນດຽວກັນ** ເພື່ອ ລົງທະບຽນຄືນ ແລະ ໂຫວດ. ຖ້າທ່ານ ບໍ່ສາມາດກະທໍາຍ້ອນບາງເຫດຜົນ, ໃຫ້ຂໍບັດລົງຄະແນນຊົ່ວຄາວ (provisional ballot) ເຊິ່ງເປັນບັດລົງຄະແນນທີ່ຈະຖືກນັບຫລັງ ວັນເລືອກຕັ້ງ ຫາກ ເຈົ້າໜ້າທີ່ການເລືອກຕັ້ງຢືນຢັນ ການມີສິດຂອງທ່ານ.

ຫລື ໂທຫາ ສາຍດ່ວນ ການປົກປ້ອງຜູ້ລົງຄະແນນ ວັນເລືອກຕັ້ງເຫລົ່ານີ້ໄດ້:

- 866-687-8683 ສໍາລັບການຊ່ວຍເຫຼືອເປັນພາສາອັງກິດ.
- 888-274-8683 ສໍາລັບການຊ່ວຍເຫຼືອເປັນພາສາອັງກິດ, ຈີນກາງ, ກວາງຕຸ້ງ, ຫວຽດນາມ, ເກົາຫຼີ, ເບັງກາລີ, ອູຣດູ, ຮິນດີ ແລະ ຕາກາລອກ.
- 888-839-8682 ສໍາລັບການຊ່ວຍເຫຼືອສອງພາສາ ອັງກິດ–ສະເປນທີ່ບໍ່ເສັຍຄ່າ.

## ຂ້າພະເຈົ້າສາມາດລົງຄະແນນໃນພາສາອື່ນນອກຈາກອັງກິດ?

ການຊ່ວຍເຫຼືອທາງພາສາແມ່ນແຕກຕ່າງກັນຕາມ ເຄົ້າຕີ. ໂທຫາ ຫ້ອງການເລືອກຕັ້ງເຄົ້າຕີຂອງທ່ານ ຫລື ໄປທີ່ສູນການລົງຄະແນນເພື່ອ ຖາມຫາກມີເອກະສານທີ່ແປແລ້ວ ແລະ ຖ້າ ເຈົ້າໜ້າທີ່ທີ່ນັ້ນ ເວົ້າພາສາທີ່ທ່ານຕ້ອງການ. ພາສາອາດຈະຖືກສະໜອງໃຫ້ໃນເຄົ້າຕີຂອງທ່ານລວມມີ: ອາລັບ, ອານບານຽນ, ເບັງກາລີ, ພະມ້າ, ຈີນ, ຟາຣຊີ, ກູຈາຣາຕີ, ຮິນດີ, ມົ້ງ, ອີໂລກາໂນ, ອິນໂດເນເຊຍ, ຍີ່ປຸ່ນ, ຂະເໝນ, ເກົາຫຼີ, ລາວ, ມຽນ, ມົງໂກ, ເນປານ, ປັນຈາບີ, ສະເປນ, ຊີຣີແອກ, ຕາກາລອກ, ຕາມິລ, ເຕລູກູ, ໄທ, ອູຣດູ ແລະ ຫວຽດນາມ.

ທ່ານຍັງສາມາດຊອກຫາ ເອກະສານແຈກສໍາລັບການເຂົ້າເຖິງພາສາໃນການລົງຄະແນນ ທີ່ໄດ້ອະທິບາຍວ່າ ພາສາໃດແດ່ມີໃຫ້ໃນ ເຄົ້າຕີຂອງທ່ານ ທີ່ advancingjustice-alc.org/know-your-voting-rights.